# ຂໍ້ຕົກລົງ

**ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກ່ຽວກັບການສືບຕໍ່ສ້າງເງື່ອນໄຂສະດວກໃຫ້ແກ່ຄົນ, ພາຫະນະ, ສິນຄ້າຜ່ານຊາຍແດນ ແນ່ໃສ່ ຊຸກຍູ້ສົ່ງເສີມຂະຫຍາຍການຮ່ວມມື ດ້ານການລົງທຶນ, ການຄ້າ ລະຫວ່າງ ສອງປະເທດ ໃຫ້ແຂງແຮງຂຶ້ນເລື້ອຍໆ**

---

ອີງຕາມສັນຍາວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ໄດ້ເຊັນກັນໃນວັນທີ 07 ເດືອນມັງກອນ (01) ປີ 2007 ທີ່ນະຄອນຫລວງຮ່າໂນ້ຍ.

ດ້ວຍຄວາມມຸ້ງມາດປາດຖະໜາ ເພື່ອເພີ່ມທະວີການຮ່ວມມືດ້ານເສດຖະກິດ ແລະ ຊຸກຍູ້ສົ່ງເສີມການຮ່ວມມືດ້ານການລົງທຶນ ແລະ ການຄ້າ ລະຫວ່າງ ສອງປະເທດ ໃຫ້ນັບມື້ນັບຂະຫຍາຍຕົວ ໂດຍສອດຄ່ອງກັບລະບຽບການສາກົນ.

ບົນຈິດໃຈ ສາຍພົວພັນມິດຕະພາບພິເສດ, ການເອົາໃຈໃສ່ໃຫ້ບູລິມະສິດຜ່ອນຜັນ ລະຫວ່າງ ສອງຝ່າຍ ແນໃສ່ເສີມຂະຫຍາຍສູງສຸດຄວາມອາດສາມາດບົ່ມຊ້ອນ ຂອງແຕ່ລະປະເທດ.

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ( ຕໍ່ໄປເອີ້ນວ່າ ສອງຝ່າຍ ) ຕົກລົງດັດແກ້, ເພີ່ມເຕີມຂໍ້ຕົກລົງ " ວຽງຈັນ 2002 ", ສະບັບລົງວັນທີ 13 ເດືອນສິງຫາ (8) ປີ 2002 ເຊິ່ງມີເນື້ອໃນລາຍລະອຽດຄືບຖ້ວນຢູ່ໃນຂໍ້ຕົກລົງໃຫມ່ນີ້, ທັງນີ້ກໍ່ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງ ແລະ ເພື່ອສືບຕໍ່ສ້າງເງື່ອນໄຂສະດວກໃຫ້ແກ່ຄົນ, ພາຫະນະ, ສິນຄ້າຜ່ານຊາຍແດນ ແນໃສ່ຊຸກຍູ້ສົ່ງເສີມຂະຫຍາຍການລົງທຶນ ແລະ ການຄ້າ ລະຫວ່າງສອງປະເທດ ຄືດັ່ງລຸ່ມນີ້:

**1. ລະບຽບການໃຫ້ ຄົນເຂົ້າ - ອອກ ແລະ ພັກຢູ່ອາໃສ:**

1.1 ສອງຝ່າຍຕົກລົງກັນວ່າ ພົນລະເມືອງຂອງສອງປະເທດ ທີ່ສັງກັດໃນບັນດາວິສາຫະກິດ ແລະ ບັນດາການຈັດຕັ້ງທີ່ມີຖານະນິຕິບຸກຄົນ ຖືໜັງສືຜ່ານແດນທຳມະດາ ທີ່ໄດ້ຈ້ຳວີຊາ SERVICE ຂອງລາວ ຫລື ຕິດສະແຕັມ AB ຂອງຫວຽດນາມ ຜ່ານຊາຍແດນ ເພື່ອໄປປະຕິບັດບັນດາຂໍ້ຜູກພັນດ້ານການຄ້າ, ແຮງງານ, ການລົງທຶນ ແລະ ໂຄງການຮ່ວມມືຕ່າງໆ; ນັກຮຽນ, ນັກສຶກສາ, ນັກຝຶກງານຕາມໂຄງການຮ່ວມມື ລະຫວ່າງສອງລັດຖະບານ ແມ່ນໄດ້ຮັບການຍົກເວັ້ນວີຊາເຂົ້າປະເທດຂອງກັນ ແລະ ກັນ ໂດຍບໍ່ຈຳເປັນສົ່ງລາຍຊື່ໄປສົມທຽບຢູ່ດ່ານ ໃນເວລາຜ່ານແດນ.

ວີຊາ SERVICE ຫລື ສະແຕັມ AB ຕ້ອງໄດ້ຈ່ຳໃສ່ໜັງສືຜ່ານແດນກ່ອນການເດີນທາງເຂົ້າໄປອີກປະເທດໜຶ່ງ. ໃນກໍລະນີ ໜັງສືຜ່ານແດນຖືກເສຍຫາຍ ແມ່ນສາມາດເຮັດໃໝ່ ແລະ ຕໍ່ກຳນົດໄດ້ຢູ່ສຳນັກງານຕາງໜ້າການທູດຂອງຕົນຢູ່ປະເທດນັ້ນ.

ໃນກຳນົດ 30 ວັນ ພາຍຫຼັງເຂົ້າປະເທດຂອງກັນ ແລະ ກັນແລ້ວ ເຈົ້າຂອງໂຄງການ ຫຼື ຜູ້ນຳໃຊ້ແຮງງານ ຕ້ອງປະກອບເອກະສານຄົບຖ້ວນ ເພື່ອຂຶ້ນທະບຽນແຮງງານ ແລະ ພັກຢູ່ອາໃສຊົ່ວຄາວໃຫ້ແກ່ຜູ້ອອກແຮງງານ ຕາມແຈ້ງການສະບັບເລກທີ 97/2006/ຈກ.ກງ, ລົງວັນທີ 16 ເດືອນ 10 ປີ 2006, ແຈ້ງການແນະນຳຈັດຕັ້ງປະຕິບັດດຳລັດສະບັບເລກທີ 24/2006/ດລ.ລບ, ລົງວັນທີ 06 ເດືອນ 03 ປີ 2006 ຂອງລັດຖະບານ ຫວຽດນາມ ແລະ ແຈ້ງການສະບັບເລກທີ 1447 / ຫສນຍ. ກລຂ, ລົງວັນທີ 31 ເດືອນ 08 ປີ 2004, ແຈ້ງການ ແນະນຳສະບັບເລກທີ 1003/ຣສສ, ລົງວັນ 15 ເດືອນ 03 ປີ 2007 ແລະ ແຈ້ງການ ເລກທີ 564/ຄລບ, ລົງວັນທີ 10 ເດືອນ 04 ປີ 2007 ຂອງລັດຖະບານລາວ.

ບັດອະນຸຍາດອອກແຮງງານ ແລະ ບັດພັກຢູ່ອາໃສຊົ່ວຄາວ ໄດ້ອອກໃຫ້ຕາມກຳນົດເວລາຂອງຂໍ້ຜູກພັນດ້ານການຄ້າ, ແຮງງານ, ການລົງທຶນ, ໂຄງການຮ່ວມມືຕ່າງໆ ແລະ ສາມາດຕໍ່ອາຍຸໄດ້ສູງສຸດ 12 ເດືອນຕໍ່ຄັ້ງ. ພົນລະເມືອງສອງປະເທດ ທີ່ໄດ້ຮັບບັດອອກແຮງງານ ແລະ ບັດພັກຢູ່ອາໃສຊົ່ວຄາວ ໄດ້ຮັບການຍົກເວັ້ນວີຊາເຂົ້າ - ອອກ ໃນໄລຍະກຳນົດເວລາພັກຢູ່ອາໃສຊົ່ວຄາວ.

1.2 ສອງຝ່າຍຕົກລົງປະຕິບັດສັນຍາ ກ່ຽວກັບການຍົກເວັ້ນວີຊາໃຫ້ແກ່ພົນລະເມືອງທີ່ຖືໜັງສືຜ່ານແດນທຳມະດາ ລະຫວ່າງສອງປະເທດ ທີ່ໄດ້ເຊັນກັນ ຄັ້ງວັນທີ 05 ເດືອນ 03 ປີ 2004 ທີ່ນະຄອນຮ່າລອງ, ຫວຽດນາມ.

ສຳລັບພົນລະເມືອງຂອງສອງປະເທດ ທີ່ຖືໜັງສືຜ່ານແດນທຳມະດາ ເຊິ່ງບໍ່ຢູ່ໃນເປົ້າຫມາຍໃນຂໍ້1.1 ຂອງຂໍ້ຕົກລົງສະບັບນີ້, ຖ້າມີຄວາມຕ້ອງການພັກຢູ່ອາໃສເກີນ 30 ວັນ ຕ້ອງໄດ້ຂໍວີຊາ (VISA) ເຂົ້າລາວ ຫລື ເຂົ້າຫວຽດນາມ ແລະ ຂຶ້ນທະບຽນພັກຢູ່ອາໃສຕາມລະບຽບການ. ກຳນົດເວລາພັກຢູ່ອາໃສສາມາດຕໍ່ອາຍຸໄດ້ ຢູ່ທີ່ປະເທດທີ່ຕົນພັກຢູ່ອາໃສສູງສຸດ 2 ຄັ້ງ, ແຕ່ລະຄັ້ງແມ່ນ 30 ວັນ. ຄ່າທຳນຽມການອອກວີຊາ ຫຼື ການຕໍ່ອາຍຸວີຊາເປັນເອກະພາບກັນ 20 ໂດລາສະຫະລັດຕໍ່ 01 ຄັ້ງ ໂດຍເກັບເປັນເງິນກີບລາວ, ເງິນດົ່ງຫວຽດນາມ ຫຼື ເປັນສະກຸນເງິນຕາຕ່າງປະເທດ (ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງລັດຫວຽດນາມ ແລະ ທະນາຄານການຄ້າຕ່າງປະເທດລາວ ທີ່ປະກາດໃຊ້ໃນເວລາເກັບ).

1.3 ສອງຝ່າຍເປັນເອກະພາບກັນ ອະນຸຍາດໃຫ້ພົນລະເມືອງຂອງແຂວງ ທີ່ມີຊາຍແດນຮ່ວມກັນໃຊ້ບັດຜ່ານແດນ ທີ່ຕຳຫຼວດແຂວງອອກໃຫ້ ເພື່ອໄປມາຫາສູ່ກັນ. ບັນດາອົງການທີ່ມີສິດອຳນາດ ຂອງສອງປະເທດຈະແຈ້ງໃຫ້ກັນຊາບ ໂດຍຜ່ານທາງການທູດ ກ່ຽວກັບແບບຟອມບັດຜ່ານແດນທີ່ຕົນນຳໃຊ້. ຖ້າມີການປ່ຽນແປງແບບຟອມໃໝ່ ຕ້ອງແຈ້ງໃຫ້ກັນຊາບລ່ວງໜ້າ 30 ວັນ. ຜູ້ທີ່ຖືບັດຜ່ານແດນອະນຸຍາດໃຫ້ພັກຢູ່ອາໃສໃນກຳນົດ 15 ວັນ, ສາມາດຕໍ່ອາຍຸໄດ້ 01 ຄັ້ງ ບໍ່ເກີນ 15 ວັນ ແລະ ມີຄຸນຄ່າພຽງແຕ່ຢູ່ໃນຂອບເຂດແຂວງ ທີ່ມີຊາຍແດນຕິດຈອດກັນ ຂອງແຕ່ລະປະເທດ. ຖ້າຕ້ອງການໄປຍັງແຂວງອື່ນ ຕ້ອງໄດ້ຮັບການອະນຸຍາດຈາກຕຳຫຼວດແຂວງນັ້ນເສຍກ່ອນ ແລະ ສາມາດນຳໃຊ້ດ່ານຊາຍແດນທີ່ສະດວກກ່ວາໝູ່ເພື່ອເຂົ້າ - ອອກ.

2. ລະບຽບການຄຸ້ມຄອງການເຂົ້າ - ອອກ ຂອງພາຫະນະ, ກົນຈັກ, ວັດສະດຸ ແລະ ອຸປະກອນ ລະຫວ່າງສອງປະເທດ.

2.1 ສອງຝ່າຍຕົກລົງເປັນເອກະພາບກັນວ່າ ມູນຄ່າພາຫະນະ, ກົນຈັກ, ວັດສະດຸ ແລະ ອຸປະກອນ ທີ່ນໍາເຂົ້າຊົ່ວຄາວຂອງທັງສອງຝ່າຍ ເພື່ອປະຕິບັດບັນດາໂຄງການລົງທຶນຢູ່ປະເທດຂອງກັນ ແລະ ກັນນັ້ນ ຕ້ອງຄິດໄລ່ເປັນສະກຸນເງິນໂດລາສະຫະລັດ (USD) ໃນເວລາແຈ້ງບັນຊີເຄື່ອງດັ່ງກ່າວ. ພາຫະນະ, ກົນຈັກ, ວັດສະດຸ ແລະ ອຸປະກອນ ທີ່ນໍາເຂົ້າຊົ່ວຄາວຕາມໂຄງການລົງທຶນນັ້ນ, ຖ້າຂາຍ ຫຼື ນໍາໃຊ້ບໍ່ຖືກກັບເປົ້າຫມາຍຂອງໂຄງການ ຈະຕ້ອງປະຕິບັດຕາມລະບຽບກົດຫມາຍທີ່ປະກາດໃຊ້ຂອງແຕ່ລະປະເທດ.

2.2 ສອງຝ່າຍເປັນເອກະພາບກັນ ປະຕິບັດຢ່າງເຂັ້ມງວດ ສັນຍາ ແລະ ອະນຸສັນຍາການຂົນສົ່ງທາງບົກ ທີ່ໄດ້ເຊັນກັນ, ພ້ອມກັນນັ້ນ ກໍ່ແຈ້ງໃຫ້ບັນດາອົງການທີ່ກ່ຽວຂ້ອງ ຂອງແຕ່ລະຝ່າຍ ແລະ ບັນດາຄູ່ດ່ານຊາຍແດນ ລະຫວ່າງສອງປະເທດ ປະຕິບັດບັນດາເນື້ອໃນເພີ່ມເຕີມດັ່ງລຸ່ມນີ້:

- ພາຫະນະ ສາມາດນໍາເຂົ້າ - ອອກຊົ່ວຄາວ ໃນແຕ່ລະປະເທດໄດ້ ພາຍໃນກໍານົດເວລາ 30 ວັນ ແລະ ອະນຸຍາດໃຫ້ຕໍ່ອາຍຸໄດ້ 1 ຄັ້ງ ໃນກໍານົດເວລາບໍ່ເກີນ 10 ວັນ ໃນກໍລະນີສຸດວິໄສ ຫລື ຍ້ອນເຫດຜົນພາວະວິໄສ. ພາຫະນະດັ່ງກ່າວ ອາດຈະນໍາເຂົ້າຊົ່ວຄາວຢູ່ດ່ານນີ້ ແລະ ອອກດ່ານອື່ນໄດ້.
- ບັນດາພາຫະນະທີ່ນໍາເຂົ້າ - ອອກຊົ່ວຄາວ ໃນແຕ່ລະປະເທດ ໄດ້ຮັບອະນຸຍາດໃຫ້ບັນທຸກເຄື່ອງຂອງ ໄດ້ທັງຂາໄປ ແລະ ຂາກັບ ໂດຍບໍ່ຈໍາເປັນຈະຂໍອະນຸຍາດນໍາທ້ອງຖິ່ນບ່ອນດ່ານອອກ, ແຕ່ບໍ່ມີສິດນໍາໃຊ້ເຂົ້າໃນເປົ້າໝາຍທຸລະກິດຂົນສົ່ງສິນຄ້າຢູ່ພາຍໃນຂອງປະເທດທີ່ໃຫ້ອະນຸຍາດນໍາເຂົ້າຊົ່ວຄາວ.
- ສອງຝ່າຍແຈ້ງໃຫ້ກັນຊາບ ແລະ ປະກາດເປີດເຜີຍ ຢູ່ດ່ານຊາຍແດນຂອງແຕ່ລະປະເທດ ກ່ຽວກັບການກໍານົດການອະນຸຍາດນໍ້າຫນັກໃຫ້ແກ່ລົດບັນທຸກຈະລາຈອນຢູ່ປະເທດຂອງຕົນ ແລະ ເປັນເອກະພາບກັນວ່າ ແຕ່ລະຝ່າຍກວດການໍ້າຫນັກລົດບັນທຸກພຽງແຕ່ເທື່ອດຽວ, ຍົກເວັ້ນແຕ່ກໍລະນີສົງໃສ.

2.3 ສອງຝ່າຍເປັນເອກະພາບກັນ ອະນຸຍາດໃຫ້ບັນດາວິສາຫະກິດສອງຝ່າຍ ນໍາເຂົ້າບັນດາພາຫະນະ, ກົນຈັກຕ່າງໆ ເພື່ອຮັບໃຊ້ການຜັນຂະຫຍາຍ, ປະຕິບັດບັນດາກິດຈະການ, ໂຄງການລົງທຶນ ແລະ ຮ່ວມມື ລະຫວ່າງສອງປະເທດ ໂດຍສາມາດຜ່ານບັນດາຄູ່ດ່ານທ້ອງຖິ່ນ (ດ່ານແຫ່ງຊາດ) ແລະ ດ່ານສາກົນ ລະຫວ່າງສອງປະເທດ.

ສໍາລັບພາຫະນະ, ກົນຈັກປະເພດຕ່າງໆ ທີ່ນອນຢູ່ໃນບັນຊີຄຸ້ມຄອງຂອງໂຄງການ ເຊິ່ງນໍາເຂົ້າຊົ່ວຄາວ ເພື່ອປະຕິບັດບັນດາໂຄງການລົງທຶນ ແລະ ໂຄງການຮ່ວມມື ລະຫວ່າງສອງລັດຖະບານ ຕ້ອງໄດ້ອອກໃບອະນຸຍາດທີ່ມີເຄື່ອງໝາຍສະເພາະ ເພື່ອເປັນພື້ນຖານໃນການຄຸ້ມຄອງການຈະລາຈອນ ຢູ່ແຕ່ລະປະເທດ.

3. ສິນຄ້າຜ່ານແດນ :

ສອງຝ່າຍຕົກລົງປະຕິບັດຢ່າງເຂັ້ມງວດ ສັນຍາການຄ້າຜ່ານແດນ ລະຫວ່າງສອງປະເທດ ທີ່ລັດຖະບານສອງຝ່າຍໄດ້ເຊັນກັນ ໃນວັນທີ 23 ເດືອນ 04 ປີ 1994 ແລະ ສັນຍາສະບັບເພີ່ມເຕີມ ທີ່ສອງຝ່າຍໄດ້ເຊັນກັນໃນວັນທີ 18 ເດືອນ 01 ປີ 2000 ກ່ຽວກັບການດັດແປງບາງມາດຕາ ຂອງສັນຍາການຄ້າຜ່ານແດນ ທີ່ໄດ້ເຊັນກັນໃນວັນທີ 23 ເດືອນ 04 ປີ 1994; ກວດກາ ຕິດຕາມ ແລະ ແຈ້ງໃຫ້ກັນຊາບຢ່າງເປັນປົກກະຕິ ກ່ຽວກັບຜົນການຈັດຕັ້ງປະຕິບັດ; ເປັນເອກະພາບກັນ ຄົ້ນຄວ້າ ແລກປ່ຽນ ແລະ ປັບປຸງ ສັນຍາສະບັບນີ້ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະປະເທດໂດຍໄວ.

4. ຄ່າພາສີອາກອນ, ບໍລິການ ແລະ ທຳນຽມ:

4.1 ສອງຝ່າຍ ສືບຕໍ່ຄົ້ນຄ້ວາເພື່ອຂະຫຍາຍລາຍການສິນຄ້າ ທີ່ໄດ້ຮັບບູລິມະສິດອັດຕາພາສີຂາເຂົ້າ 0% ແລະ ດັດແກ້ໂກຕາ ໃຫ້ແກ່ບາງປະເພດສິນຄ້າທີ່ໄດ້ຮັບບູລິມະສິດອັດຕາພາສີຂາເຂົ້າ 0% ຕາມໂກຕາ ໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງແຕ່ລະຝ່າຍ ເພື່ອນຳສະເໜີລັດຖະບານສອງຝ່າຍ ບັນຈຸເຂົ້າໃນສັນຍາຮ່ວມມືແຕ່ລະປີ.

4.2 ສອງຝ່າຍສ້າງເງື່ອນໄຂ ແລະ ແນະນຳລະອຽດໃຫ້ແກ່ບັນດາວິສາຫະກິດ ສອງປະເທດເຂົ້າຮ່ວມງານວາງສະແດງສິນຄ້າ ແລະ ຕະຫລາດນັດ ຢູ່ແຕ່ລະປະເທດໃຫ້ສະດວກທີ່ສຸດ, ຂົນສົ່ງສິນຄ້າໃຫ້ທັນເວລາ, ໃຫ້ການຜ່ອນຜັນ ຫຼຸດຜ່ອນຄ່າເຊົ່າຫ້ອງວາງສະແດງສິນຄ້າໃຫ້ແກ່ກັນ ແລະ ກັນ ແລະ ເກັບພາສີສຳລັບສິນຄ້າ ທີ່ໄດ້ຂາຍຢູ່ໃນຫ້ອງວາງສະແດງສິນຄ້າ ຫຼື ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ຢູ່ປະເທດທີ່ໄປວາງສະແດງສິນຄ້າ ຕາມລະບຽບການຂອງປະເທດດັ່ງກ່າວ.

5. ການຊຳລະສະສາງ ແລະ ການໂອນເງິນ:

5.1 ສອງຝ່າຍເປັນເອກະພາບກັນ ສົ່ງເສີມບັນດາວິສາຫະກິດຂອງສອງປະເທດ ນຳໃຊ້ເງິນກີບລາວ ( LAK ) ແລະ ເງິນດົ່ງຫວຽດນາມ ( VND ) ເຂົ້າໃນການພົວພັນການຄ້າ ແລະ ການລົງທຶນ.

5.2 ມອບໃຫ້ຂະແໜງການເງິນ ແລະ ທະນາຄານຂອງສອງປະເທດ ປະຕິບັດການເບີກຈ່າຍເປັນເງິນກີບລາວ (LAK) ແລະ ເງິນດົ່ງຫວຽດນາມ (VND) ໃຫ້ແກ່ບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອ ແລະ ກູ້ຢືມຈາກ ສສ ຫວຽດນາມ ໃຫ້ແກ່ ສປປ ລາວ.

6. ການຄວບຄຸມ ແລະ ກວດກາ:

6.1 ສອງຝ່າຍເປັນເອກະພາບກັນວ່າ ນອກຈາກການກວດກາຢູ່ທີ່ດ່ານຊາຍແດນແລ້ວ ຈະບໍ່ມີການກວດກາຢູ່ຕາມເສັ້ນທາງຂອງແຕ່ລະຝ່າຍຕື່ມອີກ, ຍົກເວັ້ນແຕ່ກໍລະນີສົງໄສ; ເພີ່ມທະວີການລົງທຶນປະກອບອຸປະກອນ ແລະ ພະນັກງານເຮັດວຽກຢູ່ດ່ານຊາຍແດນ ເພື່ອຫຼຸດຜ່ອນເວລາແຈ້ງເອກະສານ ເຂົ້າ - ອອກ ຜ່ານດ່ານຊາຍແດນຕ່າງໆ.

6.2 ສອງຝ່າຍຕົກລົງແຈ້ງເປີດເຜີຍບັນດາລະບຽບການ, ລາຍການສິນຄ້າທີ່ຕ້ອງຫ້າມ, ແນະນຳແບບຟອມໃບແຈ້ງທຸກຢ່າງ ແລະ ຂໍ້ມູນທີ່ຈຳເປັນອື່ນໆ ຢູ່ບັນດາຄູ່ດ່ານຊາຍແດນ ລະຫວ່າງສອງປະເທດ.

6.3 ສອງຝ່າຍຕົກລົງ ສຸມການລົງທຶນສ້າງບັນດາເງື່ອນໄຂທີ່ຈຳເປັນ ເພື່ອປະຕິບັດລະບອບການກວດກາ "ປ່ອງດຽວ ແລະ ຈຸດດຽວ" ຢ່າງຄົບຖ້ວນ ຕາມທີ່ໄດ້ຕົກລົງກັນ ຢູ່ຄູ່ດ່ານຊາຍແດນ ແດນສະຫວັນ - ລາວ ບ່າວ. ໃຫ້ດຳເນີນການສະຫຼຸບ, ຖອດຖອນບົດຮຽນ ການປະຕິບັດທົດລອງລະບອບການກວດກາດັ່ງກ່າວ ເພື່ອເປີດກ້ວາງການນຳໃຊ້ລະບອບການກວດກາ "ປ່ອງດຽວ ແລະ ຈຸດດຽວ" ໄປສູ່ບັນດາຄູ່ດ່ານຊາຍແດນອື່ນໆ.

6.4 ສອງຝ່າຍເພີ່ມທະວີການກວດກາຢ່າງເປັນປະຈຳ ເພື່ອສະກັດກັ້ນ ແລະ ຕ້ານການຄ້າຂາຍເຖື່ອນ ແລະ ສິ່ງເສບຕິດ ລະຫວ່າງສອງປະເທດ; ສະໜອງຂໍ້ມູນໃຫ້ກັນຊາບເປັນປົກກະຕິ, ຊອກຄົ້ນ ແລະ ປະສານສົມທົບກັນສະກັດກັ້ນບັນດາປະກົດການບັນດາກຸ່ມຄ້າຂາຍເຖື່ອນ ແລະ ຄ້າສິ່ງເສບຕິດຂ້າມຊາຍແດນຢ່າງທັນການ.

6.5 ສອງຝ່າຍເປັນເອກະພາບກັນ ປະຕິບັດໂມງເວລາເຮັດວຽກຢູ່ບັນດາດ່ານຊາຍແດນ ຂອງລາວ ແລະ ບັນດາດ່ານຊາຍແດນຂອງຫວຽດນາມ ແຕ່ 7 ໂມງ 00 ນາທີ ເຖິງ19 ໂມງ 30 ນາທີ ໃນທຸກວັນຢ່າງຕໍ່ເນື່ອງ, ນັບທັງວັນພັກບຸນ, ວັນພັກທ້າຍອາທິດ. ນອກນັ້ນ ຈະແກ້ໄຂກໍລະນີພິເສດຕ່າງໆ ທີ່ມີການຜ່ານຊາຍແດນໃນທຸກເວລາ. ສອງຝ່າຍ ແຈ້ງໃຫ້ກັນຊາບກ່ຽວກັບການເກັບຄ່າບໍລິການນອກໂມງການ, ວັນພັກບຸນ, ວັນພັກທ້າຍອາທິດ ແລະ ແຈ້ງເປີດເຜີຍເປັນເອກະພາບຢູ່ດ່ານຊາຍແດນຕ່າງໆ.

6.6 ບັນດາດ່ານຊາຍແດນສອງປະເທດ ຕ້ອງພົບປະແລກປ່ຽນ ແຈ້ງສະພາບໃຫ້ກັນຊາບໃນແຕ່ລະອາທິດ ແລະ ສະຫລຸບຕີລາ, ລາຍງານການປະຕິບັດຂໍ້ຕົກລົງສະບັບນີ້ ປະຈຳທຸກໆ 03 ເດືອນ, ໃນກໍລະນີຈຳເປັນ ແມ່ນໃຫ້ລາຍງານທັນທີ ຕໍ່ອົງການຄຸ້ມຄອງໂດຍກົງຂອງຕົນ.

7. <u>ກົນໄກ, ນະໂຍບາຍສົ່ງເສີມການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດ.</u>

7.1 ສອງຝ່າຍເປັນເອກະພາບກັນ ສົ່ງເສີມບັນດາວິສາຫະກິດສອງປະເທດ ລົງທຶນຂຸດຄົ້ນທ່າແຮງບົ່ມຊ້ອນ ທີ່ມີຢູ່ໃນແຕ່ລະປະເທດ ດ້ວຍຮູບການລົງທຶນແລກປ່ຽນກິດຈະການ ບົນພື້ນຖານແຜນການ ແລະ ແຜນກຳນົດການພັດທະນາ ຂອງແຕ່ລະປະເທດ.

7.2 ສອງຝ່າຍຕົກລົງກັນວ່າ ໃນເງື່ອນໄຂທີ່ອະນຸຍາດໄດ້ ຈະໃຫ້ບຸລິມະສິດແກ່ບັນດາວິສາຫະກິດ ຂອງແຕ່ລະປະເທດ ປະຕິບັດບັນດາໂຄງການລົງທຶນຢູ່ແຕ່ລະຝ່າຍ.

7.3 ສອງຝ່າຍຕົກລົງ ແຈ້ງເປີດເຜີຍບັນດາຄ່າພາສີ, ບໍລິການ ແລະ ທຳນຽມປະເພດຕ່າງໆ ທີ່ນຳໃຊ້ ສຳລັບບັນດາໂຄງການລົງທຶນຂອງສອງຝ່າຍຢູ່ແຕ່ລະປະເທດ. ບັນດາວັດຖຸອຸປະກອນ, ວັດຖຸດິບ, ນ້ຳມັນເຊື້ອໄຟ, ວັດສະດຸ ທີ່ນອນຢູ່ໃນບັນຊີນຳເຂົ້າຂອງໂຄງການລົງທຶນ ເພື່ອກໍ່ສ້າງພື້ນຖານວັດຖຸເບື້ອງຕົ້ນປະກອບເປັນຊັບສົມບັດຄົງທີ່ ຂອງວິສາຫະກິດ ຫລື ນຳເຂົ້າເພື່ອປ່ຽນແທນເຕັກໂນໂລຊີໃໝ່ຂອງໂຄງການຈະໄດ້ຮັບການຍົກເວັ້ນພາສີຂາເຂົ້າ.

7.4 ສອງຝ່າຍຕົກລົງອະນຸຍາດໃຫ້ບັນດາຜະລິດຕະພັນ ທີ່ບັນດາໂຄງການລົງທຶນຂອງຫວຽດນາມຜະລິດຢູ່ລາວ ແລະ ຂອງລາວ ຜະລິດຢູ່ຫວຽດນາມ ໄດ້ຂົນສົ່ງຜ່ານຊາຍແດນຂອງສອງປະເທດ ດ້ວຍຂັ້ນຕອນແບບງ່າຍດາຍທີ່ສຸດ.

7.5. ສອງຝ່າຍຕົກລົງໃຫ້ບູລິມະສິດ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ບັນດາວິສາຫະກິດ ແລະ ພົນລະເມືອງຂອງສອງປະເທດ ໃນການປະກອບເອກະສານເພື່ອການລົງທຶນ ແລະ ການຄ້າ ຢູ່ແຕ່ລະຝ່າຍ. ປະຕິບັດການອອກອະນຸຍາດລົງທຶນ ແລະ ການອອກອະນຸຍາດດຳເນີນທຸລະກິດໄປພ້ອມກັນເພື່ອໃຫ້ໂຄງການສາມາດເຄື່ອນໄຫວທຸລະກິດໄດ້ ໂດຍໄວ.

7.6 ສອງຝ່າຍຕົກລົງ ຈະພົບປະກັນເປັນປົກກະຕິ ແລະ ແຈ້ງໃຫ້ກັນຊາບ ບັນດາຂໍ້ມູນຂ່າວສານທີ່ພົວພັນເຖິງການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດຢ່າງເປັນປະຈຳ. ຈັດຕັ້ງການພົບປະເປັນປົກກະຕິ ເພື່ອຮັບຟັງ, ແກ້ໄຂບັນຫາຂໍ້ຂ້ອງໃຈ ແລະ ການສະເຫນີຂອງບັນດາວິສາຫະກິດ ຂອງສອງປະເທດຢ່າງທັນການ.

8. ສອງຝ່າຍຕົກລົງຈະຊີ້ນຳບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ, ອົງການທີ່ກ່ຽວຂ້ອງ ແລະ ບັນດາດ່ານຂອງແຕ່ລະຝ່າຍ ປະຕິບັດຢ່າງເຂັ້ມງວດບັນດາເນື້ອໃນ ທີ່ໄດ້ລະບຸໄວ້ ໃນຂໍ້ຕົກລົງສະບັບນີ້.

ຈັດຕັ້ງໜ່ວຍງານປະສົມສອງຝ່າຍ ເພື່ອກວດກາ ແລະ ລາຍງານປະຈຳທຸກໆ 6 ເດືອນ ໃຫ້ລັດຖະບານສອງຝ່າຍ ເພື່ອພິຈາລະນາ ແກ້ໄຂບັນດາຂໍ້ຄົງຄ້າງທີ່ເກີດຂຶ້ນ.

9. ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ພາຍຫລັງ 30 ວັນ ນັບແຕ່ມື້ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ເອີ້ນວ່າ "**ຂໍ້ຕົກລົງຮ່າໂນ້ຍ 2007**" ປ່ຽນແທນໃຫ້ "**ຂໍ້ຕົກລົງວຽງຈັນ 2002**" ທີ່ໄດ້ເຊັນກັນໃນວັນທີ 13 ເດືອນ 08 ປີ 2002.

ຂໍ້ຕົກລົງສະບັບນີ້ ເຮັດທີ່ນະຄອນຫລວງຮ່າໂນ້ຍ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ວັນທີ 14 ເດືອນ 09 ປີ 2007 ເປັນສອງສະບັບຕົ້ນ ດ້ວຍສອງພາສາ, ພາສາລາວ ແລະ ພາສາຫວຽດ, ທັງສອງສະບັບຕົ້ນ ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສົມສະຫວາດ ເລັ່ງສະຫວັດ
ຮອງ ນາຍົກລັດຖະມົນຕີ, ຜູ້ປະຈໍາການ

ຕາງໜ້າລັດຖະບານ
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ຫງວຽນ ຊິງ ຮຸ່ງ
ຮອງ ນາຍົກລັດຖະມົນຕີ, ຜູ້ປະຈໍາການ